vhs DVV International

Education for Everyone. Worldwide.
Lifelong.

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຈົດໝາຍຂ່າວ

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້



ສະບັບທີ
2- 2022

ສະໜັບສະໜູນໂດຍ
Federal Ministry
for Economic Cooperation
and Development

DVV International

Education for Everyone. Worldwide.
Lifelong.



ຮຽນທ່ານຜູ້ອ່ານທີ່ຮັກແພງ,

ພວກເຮົາຫວນຄືນເບິ່ງຜ່ານມາແມ່ນປີທີ່ໜ້າສົນໃຈສໍາລັບການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ໂດຍມີຈຸດເດັ່ນສໍາຄັນຢູ່ທີ່ກອງປະຊຸມສາກົນກ່ຽວກັບການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ຄັ້ງທີ VII (CONFINTEA VII). ທີ່ເມືອງມາຣາເກັດ (Marrakech) ປະເທດມາຣົກໂຄ (Morocco) ເດືອນມິຖຸນາ ທີ່ຜ່ານມາ. ກອງປະຊຸມລະດັບສູງຂອງອົງການສະຫະປະຊາຊາດ ເຊິ່ງມີຕົວແທນຈາກ ດີວີວີ ອິນເຕີເນເຊິນແນວ ແລະ ຄູ່ຮ່ວມພັດທະນາທີ່ສໍາຄັນເຂົ້າຮ່ວມ ເຊັ່ນ ສະມາຄົມ ASPBAE ແລະ ສະພາການສຶກສາຜູ້ໃຫຍ່ສາກົນ (ICAE). ການມີເຂົ້າຮ່ວມນີ້ ແລະ ທີ່ສໍາຄັນກວ່ານັ້ນແມ່ນພື້ນຖານທັງໝົດໃນການປຶກສາຫາລື ເພື່ອກະກຽມກອງປະຊຸມເປັນການປູທາງໄປສູ່ຜົນກະທົບທີ່ເຂັ້ມແຂງຂອງພາກປະຊາສັງຄົມຕໍ່ກັບໝາກຜົນຂອງກອງປະຊຸມ.

ເອກະສານກ່ຽວກັບຜົນໄດ້ຮັບຂອງກອງປະຊຸມ ທີ່ຮຽກວ່າ ຂອບປະຕິບັດງານມາຣາເກັດ (Marrakech Framework for Action(MFA)) ເຊິ່ງຕອນນີ້ເປັນເອກະສານອ້າງອີງຕົວຫຼັກສໍາລັບລັດຖະບານແຫ່ງຊາດ ເພື່ອເສີມສ້າງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE) ໃນປະເທດຂອງຕົນ ແລະ ແນ່ນອນວ່າພາກປະຊາສັງຄົມສາມາດນໍາໃຊ້ເພື່ອຊ່ວຍໃຫ້ລັດຖະບານເຫັນເຖິງຄວາມສໍາຄັນໄດ້. ຫົວຂໍ້ສໍາຄັນຂອງ MFA ແມ່ນ “ການໝູນໃຊ້ທັນປ່ຽນພະລັງຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່”. ປະກອບມີຄໍາແນະນໍາເພື່ອຮັບຮູ້ການຫັນປ່ຽນພະລັງຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ໃນ 6 ຂົງເຂດຫຼັກ: 1. ກໍານົດຂອບເຂດການເຮັດວຽກ ແລະ ການຄຸ້ມຄອງ, 2. ການອອກແບບລະບົບຄືນໃໝ່ຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່, 3. ຮັບປະກັນຄຸນນະພາບການຮຽນ, 4. ການເພີ່ມທຶນ, 5. ສົ່ງເສີມການລວມເຂົ້າກັນ ແລະ 6. ຂະຫຍາຍຂອບເຂດການຮຽນຮູ້.

ມັນເຫັນໄດ້ຊັດເຈນວ່າ MFA ຖ້າປຽບທຽບໃສ່ ຂອບການປະຕິບັດງານເບເລັມ (Belem Framework for Action (BFA)), ເອກະສານຜົນໄດ້ຮັບຂອງກອງປະຊຸມ CONFINTEA ໃນປີ 2009 ທີ່ບຣາຊິນ, ສະແດງໃຫ້ເຫັນຄວາມກ້າວໜ້າທີ່ຊັດເຈນບາງຢ່າງ. ໃນປະຈຸບັນມັນໄດ້ກໍານົດຢ່າງຊັດເຈນວ່າ ALE ເປັນສ່ວນໜຶ່ງທີ່ສໍາຄັນຂອງການຮຽນຮູ້ຕະຫຼອດຊີວິດ (LLL). ຫຼື ເວົ້າອີກຢ່າງໜຶ່ງວ່າ: ຈະບໍ່ມີການຮຽນຮູ້ຕະຫຼອດຊີວິດທີ່ບໍ່ມີການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່. ຈາກນັ້ນ MFA ຈະເຊື່ອມໂຍງກັບເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ເນັ້ນຢໍ້າເຖິງຄວາມສໍາຄັນຂອງການຮູ້ໜັງສື ແລະ ການປ່ຽນແປງຈຸດພິເສດຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່.

ອີກສອງປະເດັນທີ່ສໍາຄັນສໍາລັບວຽກງານຂອງພວກເຮົາໃນລາວ ແລະ ກໍາປູເຈຍ: ປະເດັນທໍາອິດແມ່ນ MFA ຮັບຮູ້ເຖິງຄວາມສໍາຄັນຂອງສະຖາບັນ ALE ໃນຂັ້ນທ້ອງຖິ່ນ. ໂດຍສະເພາະໃນສູນການຮຽນຮູ້ຊຸມຊົນ ແລະ ສູນພັດທະນາການສຶກສານອກໂຮງຮຽນ ໃນບໍລິບົດຂອງພວກເຮົາ. ປະເດັນທີສອງແມ່ນຄວາມສໍາຄັນຂອງກົນໄກ RVA (ການຮັບຮູ້, ການຍອມຮັບ ແລະ ການຮັບຮອງ) ກົນໄກຖືກເນັ້ນຢໍ້າຢ່າງເທົ່າທຽມກັນ. ດັ່ງທີ່ເຮົາຮູ້ກັນກ່ຽວກັບ RVA ນັ້ນມີຄວາມສໍາຄັນຫຼາຍຂຶ້ນໃນການດໍາເນີນການຕາມດໍາລັດການຮຽນຮູ້ຕະຫຼອດຊີວິດ, ໃນປະຈຸບັນນີ້ MFA ແມ່ນໄດ້ສະໜັບສະໜູນຄວາມພະຍາຍາມເຫຼົ່ານີ້.

ແນ່ນອນວ່າເຮົາຈະຕ້ອງເບິ່ງຕໍ່ໄປວ່າເຮົາຈະດໍາເນີນການໄດ້ແນວໃດ. ບໍ່ວ່າໃນກໍລະນີໃດກໍຕາມ, ມັນເປັນແຮງຊຸກດັນ ແລະ ຈະໄດ້ຮັບຄວາມສົນໃຈຫຼາຍໃນຈົດໝາຍຂ່າວສະບັບນີ້ໂດຍຜ່ານບົດລາຍງານ. ກ່ຽວກັບເຫດການພາຍຫຼັງ ກອງປະຊຸມ CONFINTEA ທີ່ ຫວຽດນາມ. ບົດຄວາມເພີ່ມເຕີມໃນສະບັບນີ້ຈະໃຫ້ຄວາມກະຈ່າງແຈ້ງກ່ຽວກັບກອງປະຊຸມການສຶກສາຜູ້ໃຫຍ່ຂອງເຢຍລະມັນ ເຊິ່ງຈັດຂຶ້ນໃນເດືອນມິຖຸນາ ພາຍຫຼັງກອງປະຊຸມ CONFINTEA ແລະ ໃນນັ້ນກໍ່ມີຄະນະຜູ້ແທນຈາກລາວເຂົ້າຮ່ວມ.

ໃນຕອນນີ້ມີການວາງຮາກຖານຢ່າງຫຼວງຫຼາຍແລ້ວ. ໃນຂະນະດຽວກັນ, ພວກເຮົາຈໍາເປັນຕ້ອງກໍານົດຈຸດສຸມຂອງພວກເຮົາຢ່າງຖືກຕ້ອງ ແລະ ເບິ່ງວ່າພວກເຮົາໄດ້ຮັບຜົນປະໂຫຍດຢ່າງແທ້ຈິງຈາກທ່າອ່ຽງ ແລະ ການພັດທະນາຂອງສາກົນໄດ້ແນວໃດ. ຫວັງວ່າຜົນປະໂຫຍດເຫຼົ່ານີ້ຈະແຂງແກ່ນ ແລະ ຍາວນານ ຂ້າພະເຈົ້າ ຂໍໃຫ້ທຸກທ່ານເລີ່ມຕົ້ນປີ 2023 ໄດ້ຢ່າງດີເລີດ.

ດ້ວຍຄວາມນັບຖື
*Johann Heilmann*
ຜູ້ອໍານວຍການປະຈໍາພາກພື້ນ

# ເຮົາບໍ່ມີການສຶກສາຜູ້ໃຫຍ່ ...
# ... ແຕ່ພວກເຮົາມີຂໍ້ສະເໜີການສຶກສາຜູ້ໃຫຍ່!
## ຫວຽດນາມ ແລະ ຂະບວນການຫຼັງ CONFINTEA

*Johann Heilmann*, DVV International

ຂອບປະຕິບັດງານມາຣາເກັດ (Marrakech Framework for Action (MFA)) ເປັນເອກະສານຜົນໄດ້ຮັບທີ່ສຳຄັນຂອງ ກອງປະຊຸມການສຶກສາຜູ້ໃຫຍ່ສາກົນຄັ້ງທີ VII (CONFINTEA VII) ສາມາດຕີຄວາມໄດ້ຢ່າງແນ່ນອນວ່າມີບາງສິ່ງທີ່ຈະນຳສະເໜີສຳລັບຊຸມຊົນຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ALE: ການຮັບຮູ້ວ່າ ALE ເປັນສ່ວນໜຶ່ງຂອງການຮຽນຮູ້ຕະຫຼອດຊີວິດ ຄວາມຕ້ອງການຂອງລະບົບ ALE ທີ່ກວມ ຫຼື ການເນັ້ນໜັກເຖິງຄວາມສຳຄັນຂອງສະຖາບັນ ALE ໃນທ້ອງຖິ່ນ ເຊັ່ນ: ສູນການຮຽນຮູ້ຊຸມຊົນ ແຕ່ສິ່ງນີ້ມີຄວາມໝາຍແນວໃດສຳລັບປະເທດສະມາຊິກຂອງ UNESCO?

### SEAMEO CELLL ເຊີນບັນດາພາກສ່ວນກ່ຽວຂ້ອງເຂົ້າຮ່ວມ

ຢູ່ຫວຽດນາມ, ໄດ້ມີຄວາມພະຍາຍາມເພື່ອຕອບຄຳຖາມເຫຼົ່ານີ້ໃນກອງປະຊຸມທີ່ຈັດໂດຍສູນແຫ່ງການຮຽນຮູ້ຕະຫຼອດຊີວິດຂອງ ອົງການລັດຖະມົນຕີສຶກສາທິການແຫ່ງອາຊີຕາເວັນອອກສ່ຽງໃຕ້ (SEAMEO CELLL) ເຊິ່ງກອງປະຊຸມນີ້ໄດ້ຮັບການສະໜັບສະໜູນຈາກ ດີວີວີ ອິນເຕີເນເຊິນແນວ. ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 25 ຕຸລາ ຢູ່ທີ່ນະຄອນໂຮ່ຈິມິນ, ໂດຍມີບັນດາຜູ້ເຂົ້າຮ່ວມຈາກອົງການຈັດຕັ້ງເຈົ້າພາບ ລວມທັງຈາກກະຊວງສຶກສາທິການ, ສູນການຮຽນຮູ້ຊຸມຊົນ, ສະມາຄົມຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການສຶກສາຜູ້ໃຫຍ່ ແລະ ຕົວແທນຈາກຄະນະບໍລິຫານງານ SEAMEO CELLL ຈາກປະເທດອາຊີຕາເວັນອອກສ່ຽງໃຕ້ເຂົ້າຮ່ວມ.

ຜູ້ອຳນວຍການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຂອງ ດີວີວີ ອິນເຕີເນເຊິນແນວ ແລະ ຈຸດສຸມສຳລັບ GRALE V (ບົດລາຍງານທົ່ວໂລກກ່ຽວກັບການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່) ການສຳຫຼວດໄດ້ເປີດຊ່ອງທາງໃຫ້ມີການປຶກສາຫາລືຕື່ມອີກ ໂດຍສະເໜີໝາກຜົນຂອງກອງປະຊຸມ CONFINTEA VII ແລະ ສ່ອງແສງໃຫ້ເຫັນສະພາບການປະຈຸບັນຂອງ ALE ໃນຫວຽດນາມ. ຫຼັງຈາກນັ້ນ, ແມ່ນການສຳນະເໜີຂໍ້ມູນຈາກປະເທດເພື່ອນບ້ານກ່ຽວກັບແນວທາງປະຕິບັດທີ່ດີຂອງ ALE ແລະ






ຜູ້ອຳນວຍການພາກພື້ນຂອງພວກເຮົາສະເໜີຂອບປະຕິບັດງານ CONFINTEA

ຈຸດປະສົງໃໝ່ທີ່ຕັ້ງຂຶ້ນພາຍຫຼັງກອງປະຊຸມ CONFINTEA VII.

## ALE ໃນຫວຽດນາມ – ຫຼື ເຮົາຮຽກວ່າແນວໃດ?

ພາຍຫຼັງຂັ້ນຕອນນີ້ໄດ້ຖືກຕັ້ງ, ການໂຕ້ວາທີທີ່ຄຶກຄື້ນ ແລະ ຄາດການລ່ວງໜ້າໄດ້ພັດທະນາຂຶ້ນ. ໃນຕອນທຳອິດ, ການໂຕ້ວາທີນີ້ ມີທິດທາງທີ່ໜ້າສົນໃຈ ເມື່ອຜູ້ເຂົ້າຮ່ວມທ່ານໜຶ່ງຍອມຮັບວ່າ ຄຳວ່າ "ການສຶກສາຜູ້ໃຫຍ່" ບໍ່ຄ່ອຍຖືກໃຊ້ໃນຫວຽດນາມ ເພາະວ່າມັນບໍ່ເໝາະສົມທີ່ຜູ້ໃຫຍ່ຈຳເປັນຕ້ອງຮຽນຮູ້ ເພາະວ່າພວກເຂົາເປັນຜູ້ໃຫຍ່ແລ້ວ. ຢ່າງໃດກໍຕາມ, ວິທີແກ້ໄຂນັ້ນງ່າຍຫຼາຍ: ຄືໃຊ້ຄຳວ່າ "ການສຶກສາຕໍ່ເນື່ອງ" ເຊິ່ງຖືກໃຊ້ໃນລະດັບກວ້າງ ແລະ ກວມລວມສິ່ງທີ່ພວກເຮົາເຂົ້າໃຈໂດຍທົ່ວໄປກ່ຽວກັບການສຶກສາຜູ້ໃຫຍ່.

ແທ້ຈິງແລ້ວ, ລະບົບການສຶກສາຂອງຫວຽດນາມແມ່ນທັນສະໄໝໃນຫຼາຍດ້ານ. ໂດຍສະເພາະແມ່ນມີສູນການຮຽນຮູ້ຊຸມຊົນຫຼາຍກວ່າ 10,000 ແຫ່ງ ເຊິ່ງມັນກໍ່ຂ້ອນຂ້າງແປກທີ່ມີພຽງບາງສ່ວນເທົ່ານັ້ນທີ່ບໍ່ໄດ້ເຮັດວຽກຢ່າງເຕັມສ່ວນ. ສິ່ງທ້າທາຍນີ້ ແລະ ອື່ນໆ ແມ່ນໄດ້ມີການສົນທະນາກັນໃນຕອນບ່າຍຂອງກອງປະຊຸມ - ໃນທຸກໆຄັ້ງທີ່ຈຸດປະສົງເພື່ອເຊື່ອມໂຍງກັບສິ່ງທ້າທາຍທີ່ລະບຸເຂົ້າກັບໂອກາດໃໝ່ໆ ທີ່ອາດເປີດຂຶ້ນພ້ອມກັບການດຳເນີນການຂອງ MFA. ມີຂໍ້ຕົກລົງທົ່ວໄປວ່າກ່ອນທີ່ຈະມີການຊຸກຍູ້ຈາກລັດຖະບານ ເພື່ອເຮັດໃຫ້ຫວຽດນາມເປັນ "ສັງຄົມແຫ່ງການຮຽນຮູ້" ມັນເປັນສ່ວນໜຶ່ງຂອງວັດທະນະທຳຫວຽດນາມ ທີ່ຍາມໃດ ກໍພະຍາຍາມຮໍ່າຮຽນເພີ່ມຕື່ມ. ຄຽງຄູ່ກັນນັ້ນ, ຫຼາຍບັນຫາໄດ້ຍົກຂຶ້ນມາ ທີ່ມີຄວາມຈຳເປັນໃນການປັບປຸງຢ່າງຮີບດ່ວນ: ໃນບາງໂອກາດ, ຜູ້ເຂົ້າຮ່ວມໄດ້ສົນທະນາກ່ຽວກັບຄວາມຈຳເປັນຂອງລະບົບການຮັບປະກັນຄຸນນະພາບ. ນອກຈາກນີ້, ຈຳເປັນຕ້ອງມີກົນໄກ RVA (ການຮັບຮູ້-ການຍອມຮັບ-ການຮັບຮອງ) ເພື່ອສະໜັບສະໜູນເພີ່ມຕື່ມໃຫ້ປະຊາຊົນໃນການຮຽນຮູ້ (ຕາມອັດທະຍາໄສ/ນອກໂຮງຮຽນ) ຂອງເຂົາເຈົ້າ. ແລະ ທ້າຍສຸດ, ມີຂໍ້ຕົກລົງວ່າງົບປະມານ ສະໜັບສະໜູນ ສຳລັບ ALE (ຫຼື ການສຶກສາຕໍ່ເນື່ອງ) ຈະມີຈຳກັດ, ກະຊວງອື່ນໆຄວນໄດ້ຮັບການຈູງໃຈໃຫ້ລົງທຶນໃນການສຶກສາຜູ້ໃຫຍ່ເຊັ່ນກັນ. ບັນດາຈຸດສຳຄັນທີ່ຍົກມານີ້ ອາດກາຍເປັນສ່ວນໜຶ່ງຂອງລະບົບການສຶກສາຜູ້ໃຫຍ່ຂອງຫວຽດນາມ ແລະ ບໍ່ວ່າໃນກໍລະນີໃດກໍຕາມ, ຄວາມຈິງທີ່ວ່າ MFA ກຳນົດວ່າມັນຈຳເປັນຕ້ອງມີລະບົບ ALE ແຍກຕ່າງຫາກແມ່ນໄດ້ຖືກຍອມຮັບຈາກຜູ້ເຂົ້າຮ່ວມທັງໝົດ.

## ທິດທາງຂ້າງໜ້າ – ການຮຽນຮູ້ຕະຫຼອດຊີວິດໃນຫວຽດນາມ

ເລີ່ມເຂົ້າສູ່ໄລຍະໃໝ່ລະຫວ່າງ ສອງຊ່ວງເວລາຂອງ CONFINTEA, ຫວຽດນາມໄດ້ກຳນົດເປົ້າໝາຍທີ່ຍິ່ງໃຫຍ່ແລ້ວ: ຈົນເຖິງປີ 2025 ກົດໝາຍກ່ຽວກັບການຮຽນຮູ້ຕະຫຼອດຊີວິດຈະຖືກວາງອອກ. ກົດໝາຍນີ້ເປັນທີ່ຕ້ອງການຂອງຜູ້ມີສ່ວນກ່ຽວຂ້ອງທັງໝົດໃນຂົງເຂດການສຶກສາ ແລະ ອີກຫຼາຍຂົງເຂດ ໂດຍສະເພາະໃນຂົງເຂດວຽກງານການສຶກສາຜູ້ໃຫຍ່. ການພັດທະນາກົດໝາຍສະບັບນີ້ບໍ່ພຽງແຕ່ກ່ຽວຂ້ອງກັບໜ່ວຍງານພາກລັດເທົ່ານັ້ນ ແຕ່ຍັງລວມເຖິງຜູ້ສະໜັບສະໜູນທີ່ກ່ຽວຂ້ອງອື່ນໆ ເຊັ່ນ: ສະມາຄົມຫວຽດນາມເພື່ອສົ່ງເສີມການຮຽນຮູ້ (VALP) ແລະ ສະມາຄົມຫວຽດນາມເພື່ອການສຶກສາເພື່ອທຸກຄົນ. ໃນອະນາຄົດພາຍໜ້ານີ້, SEAMEO CELLL ຈະຫາລືກ່ຽວກັບຄຳແນະນຳ ຂອງກອງປະຊຸມກັບກະຊວງຕື່ມອີກ ແລະ ການການປະຕິບັດເຊັ່ນນັ້ນ, ໝັ້ນໃຈວ່າຈະບັນລຸໄດ້ພຽງແຕ່ເປີດຫູ.

# ການສຶກສາຜູ້ໃຫຍ່:
# ສິ່ງພິມໃໝ່ ເປັນພາສາລາວ

*Johann Heilmann*, DVV International

ເປັນຄຳເວົ້າໜຶ່ງທີ່ພົບເລື້ອຍເມື່ອເວົ້າເຖິງການຮຽນຮູ້ຕະຫຼອດຊີວິດ: ປະເທດລາວຕ້ອງການວັດທະນະທຳການອ່ານ! ໃນຂະນະທີ່ຕົນເອງເຫັນໄດ້ວ່າ ການອ່ານເປັນເສົາຄ້ຳສຳຄັນອັນໜຶ່ງຂອງການຮຽນຮູ້ (ຕະຫຼອດຊີວິດ) ແຕ່ກໍຍັງປະຕິເສດບໍ່ໄດ້ວ່າຜະລິດຕະພັນທີ່ສາມາດອ່ານໄດ້ໃນພາສາລາວແມ່ນຍັງຂາດແຄນ. ນີ້ເລີ່ມຕົ້ນຈາກປຶ້ມຂອງເດັກນ້ອຍ, ຕາມມາດ້ວຍນະວະນິຍາຍ ແລະ ວັນນະຄະດີອື່ນໆ ແລະ ຍັງເປັນຄວາມຈິງສຳລັບການສິ່ງພິມດ້ານວິທະຍາສາດຕ່າງໆ.

ແນ່ນອນ, ມັນຕ້ອງໃຊ້ເວລາຈົນກວ່າຜູ້ຂຽນຈະພິມພາສາລາວຫຼາຍຂຶ້ນ. ແຕ່ສິ່ງທີ່ພວກເຮົາຕ້ອງການແມ່ນປຶ້ມແບບຮຽນ, ນະວະນິຍາຍ, ບົດຄວາມວິທະຍາສາດ, ວາລະສານ ແລະ ອື່ນໆ ອີກຫລາຍຢ່າງທີ່ຈະແປເປັນພາສາລາວເຊັ່ນດຽວກັນ. ນີ້ສາມາດເຫັນໄດ້ໃນການສຶກສາຜູ້ໃຫຍ່ເຊັ່ນກັນ. ເປັນການປະກອບສ່ວນອັນລ້ຳຄ່າຫຼາຍ, ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໄດ້ແປໜັງສືໄທຈຳນວນໜຶ່ງໃນຂະແໜງການຮຽນຮູ້ຕະຫຼອດຊີວິດເປັນພາສາລາວ ແຕ່ຍັງມີຄວາມຈຳເປັນຫຼາຍຢ່າງ. ດັ່ງນັ້ນ, ດີວີວີ ອິນເຕີເນເຊິນແນວ ຈຶ່ງໄດ້ພະຍາຍາມແປບາງສິ່ງພິມທີ່ກ່ຽວຂ້ອງກັບການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່ (ALE) ເປັນພາສາລາວ. ມັນປະກອບມີຄຳນິຍາມກ່ຽວກັບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ເຊິ່ງປະຈຸບັນໄດ້ຖືກເຜີຍແຜ່ໂດຍຜ່ານຂະບວນການຂອງ ALE ເຊັ່ນດຽວກັນກັບຄຳແນະນຳຂອງ UNESCO ກ່ຽວກັບການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່. ໃຜທີ່ເຫັນວ່າມັນຫຍຸ້ງຍາກ ທີ່ຈະອ່ານເອກະສານທັງໝົດນີ້ເປັນພາສາອັງກິດ ທ່ານສາມາດ ໄປເອົາສະບັບພາສາລາວໄດ້ທີ່ຫ້ອງການ ດີວີວີ ຂອງພວກເຮົາ. ໃຊ້ປະໂຫຍດຈາກສິ່ງນີ້ ແລະ ກາຍເປັນຜູ້ຊ່ຽວຊານທີ່ດີກວ່າໃນການສຶກສາຜູ້ໃຫຍ່!



# ຕາງໜ້າຈາກ ສປປ ລາວ ເຂົ້າຮ່ວມກອງປະຊຸມການສຶກສາຜູ້ໃຫຍ່ຂອງເຢຍລະມັນຄັ້ງທີ 15

*ດາລຸນນີ ສີສຸລາດ & Chiara D'Urso,* DVV International Laos

*ໃນລະຫວ່າງວັນທີ 14-24 ມິຖຸນາ 2022 ຄະນະຜູ້ແທນຈາກລັດຖະບານ ສປປ ລາວ ໄດ້ເຄື່ອນໄຫວຢ້ຽມຢາມປະເທດເຢຍລະມັນ*

ໃນທຸກໆ 4 ປີ ສະມາຄົມການສຶກສາຜູ້ໃຫຍ່ຂອງເຢຍລະມັນ ໄດ້ຈັດກອງປະຊຸມການສຶກສາຜູ້ໃຫຍ່ຂອງເຢຍລະມັນ ເຊິ່ງໃນປີ 2022 ແມ່ນໄດ້ຈັດຂຶ້ນເປັນຄັ້ງທີ 15 ທີ່ເມືອງ ແລັບຊິກ (Leipzig). ກອງປະຊຸມມີຈຸດປະສົງເພື່ອໃຫ້ພາກສ່ວນຕ່າງໆ ທີ່ເຮັດວຽກກ່ຽວກັບການສຶກສາຜູ້ໃຫຍ່ໃນປະເທດເຢຍລະມັນ ແລະ ຕ່າງປະເທດ ໄດ້ແລກປ່ຽນບົດຮຽນດ້ານຜົນສຳເລັດ ແລະ ສິ່ງທ້າທາຍໃນການພັດທະນາວຽກການສຶກສາຜູ້ໃຫຍ່ ໂດຍສະເພາະແມ່ນການຈັດການຮຽນການສອນໃນໄລຍະທີ່ມີການແຜ່ລະບາດຂອງໂຄວິດ 19 ແລະ ສະພາບການຜັນແປຂອງເສດຖະກິດ-ສັງຄົມ ແລະ ການເມືອງໃນປະຈຸບັນ. ກອງປະຊຸມຍັງເປັນເວທີໃນການສົນທະນາກ່ຽວກັບແນວທາງນະໂຍບາຍໃນການພັດທະນາວຽກງານການສຶກສາຜູ້ໃຫຍ່ໃນອະນາຄົດ.

ກອງປະຊຸມການສຶກສາຜູ້ໃຫຍ່ຄັ້ງທີ 15 ນີ້ ໄດ້ມີ ຜູ້ເຂົ້າຮ່ວມຈາກບັນດາຜູ້ແທນຂັ້ນສູງຂອງລັດຖະບານ, ສະຖາບັນການສຶກສາ, ສູນການສຶກສາຜູ້ໃຫຍ່ ແລະ ອົງການຈັດຕັ້ງຕ່າງໆ ຂອງເຢຍລະມັນ ທີ່ເຮັດວຽກກ່ຽວຂ້ອງກັບການພັດທະນາການສຶກສາຜູ້ໃຫຍ່ຢູ່ໃນປະເທດເຢຍລະມັນ ແລະ ປະເທດອື່ນໆ ຫຼາຍກວ່າ 15 ປະເທດເຂົ້າຮ່ວມ. ຄະນະຜູ້ແທນ ຈາກ ສປປ ລາວ ຈາກກະຊວງສຶກສາທິການ ແລະ ກິລາ ແລະ ຜູ້ນຳນວຍການອົງການດີວີວີ ປະຈຳພາກພື້ນຕ່າງໆ ເຂົ້າຮ່ວມ.



ຄະນະຜູ້ແທນຈາກກະຊວງສຶກສາທິການ ແລະ ກິລາ (ລາວ) ແລະ ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ (ກຳປູເຈຍ) ຮ່ວມກັບ ຜູ້ອຳນວຍການປະຈຳພາກພື້ນ, ຜູ້ອຳນວຍປະຈຳປະເທດ ແລະ ຜູ້ບໍລິຫານໂຄງການຈາກ ລາວ ແລະ ກຳປູເຈຍ.

ການຢ້ຽມຢາມ ສະຫະພັນເຢຍລະມັນ ຄັ້ງນີ້ແມ່ນມີຈຸດປະສົງເພື່ອເປັນການຖອດຖອນບົດຮຽນ ແລະ ສ້າງເຄືອຂ່າຍກັບພາກສ່ວນຕ່າງໆ ທີ່ເຮັດວຽກທາງດ້ານນະໂຍບາຍ ແລະ ການພັດທະນາວຽກງານການສຶກສາຜູ້ໃຫຍ່ ຢູ່ເຢຍລະມັນ ແລະ ປະເທດອື່ນໆ. ພ້ອມດຽວກັນນັ້ນ, ການເຂົ້າຮ່ວມກອງປະຊຸມຄັ້ງນີ້ຍັງມີຈຸດປະສົງເພື່ອໃຫ້ການສະໜັບສະໜູນອົງການດີວີວີ ທີ່ມີພາກພື້ນຕັ້ງຢູ່ ສປປ ລາວ ແລະ ມີຜົນງານໃນການຊຸກຍູ້ວຽກງານການສຶກສາຜູ້ໃຫຍ່ໃນ ສປປ ລາວ ແລະ ລາຊາອານາຈັກກຳປູເຈຍ ໃຫ້ປະເທດອື່ນຮັບຮູ້ຫຼາຍຂຶ້ນກວ່າເກົ່າ.

ນອກຈາກເຂົ້າຮ່ວມປະຊຸມດັ່ງກ່າວ ຄະນະຜູ້ແທນຈາກ ສປປ ລາວ ກໍໄດ້ຢ້ຽມຢາມ ແລະ ແລກປ່ຽນບົດຮຽນກ່ຽວກັບລະບົບການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ກັບຄະນະສຶກສາສາດ ຂອງມະຫາວິທະຍາໄລ ຮາມເບີກ (Hamburg), ຢ້ຽມຢາມສູນການສຶກສາຜູ້ໃຫຍ່ທີ່ ເມືອງພິນເບີກ (Pinneburg) ແລະ ເມືອງ Hamburg, ກົມການສຶກສານອກໂຮງຮຽນ ແລະ ສູນຝຶກອົບຮົມວິຊາຊີບ, ກົມພັດທະນາຍຸດທະສາດ ແລະ ການຫັນເປັນດີຈີຕອນພາກພື້ນ. ນອກນັ້ນ ຄະນະຜູ້ແທນ ສປປ ລາວ ຍັງໄດ້ເຂົ້າພົບທ່ານຮອງເຈົ້າຄອງເມືອງ Hamburg, ຜູ້ຊີ້ນຳວຽກງານອາຊີວະສຶກສາ ແລະ ການສຶກສາຜູ້ໃຫຍ່ ແລະ ຢ້ຽມຢາມສະຖາບັນການຮຽນຮູ້ຕະຫຼອດຊີວິດຂອງຢູເນສໂກ (UNESCO Institute for Lifelong Learning: UIL).

ໂດຍຜ່ານກອງປະຊຸມ ສາມາດຖອດຖອນໄດ້ບົດຮຽນສຳຄັນດັ່ງນີ້

- ນວທາງນະໂຍບາຍຂອງວຽກງານການສຶກສາຜູ້ໃຫຍ່ຂອງເຢຍລະມັນແມ່ນເປີດໂອກາດໃຫ້ປະຊາຊົນໄດ້ເຂົ້າເຖິງການຮຽນຮູ້ ໃນທຸກກາລະໂອກາດ ແລະ ໃນທຸກໆລະບົບການສຶກສາ (ໃນໂຮງຮຽນ, ນອກໂຮງຮຽນ ແລະ ບໍ່ເປັນທາງການ) ເພື່ອພັດທະນາຂີດຄວາມສາມາດຂອງຕົນເອງ ເຊິ່ງສອດຄ່ອງກັບແນວທາງການຮຽນຮູ້ຕະຫຼອດຊີວິດຂອງອົງການຢູເນສໂກ.



ການຮັບຕ້ອນ ແລະ ສົນທະນາກັບ Rainer Schulz (ສະພາແຫ່ງລັດທີ່ຄຸ້ມຄອງ ໂຮງຮຽນແລະການຝຶກອົບຮົມວິຊາຊີບ) ກ່ຽວກັບການສຶກສາເພີ່ມເຕີມ

- ເຢຍລະມັນໄດ້ມີການພັດທະນາບັນດານິຕິກຳ, ນະໂຍບາຍສຳລັບການພັດທະນາໂຄງລ່າງພື້ນຖານ ເພື່ອໃຫ້ປະຊາຊົນເຂົ້າເຖິງການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່, ການສະໜັບສະໜູນທາງດ້ານງົບປະມານຂອງລັດ, ສູນການສຶກສາຜູ້ໃຫຍ່ມີລະບົບວິທີການປະຕິບັດເພື່ອເປັນເຈົ້າຕົນເອງໃນການຈັດການບໍລິຫານງົບປະມານ, ມີການພັດທະນາຫຼັກສູດການຮຽນ-ການສອນ ທີ່ຫຼາກຫຼາຍເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນ, ການຊຸກຍູ້ສົ່ງເສີມດັ່ງກ່າວໄດ້ເຮັດໃຫ້ອັດຕາການເຂົ້າຮຽນຂອງຜູ້ໃຫຍ່ເພີ່ມຂຶ້ນ.
- ລະບົບອາຊີວະສຶກສາຂອງປະເທດເຢຍລະມັນ ເຊິ່ງເປັນລະບົບໂຄງສ້າງທີ່ມີການພັດທະນາມາຍາວນານ ແລະ ມີລັກສະນະສະເພາະ ໃນນັ້ນ ແມ່ນການສ້າງຫຼັກສູດທີ່ເນັ້ນໃສ່ການພັດທະນາສີມືແຮງງານ ໂດຍການຮ່ວມກັບພາກເອກະຊົນໃນການສ້າງຊັບພະຍາກອນມະນຸດ.
- ຂະບວນການສ້າງຄູ ແລະ ການຄົ້ນຄວ້າວິໄຈ ເພື່ອມາຮັບໃຊ້ວຽກງານການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ຂອງຄະນະສຶກສາສາດ ເຊິ່ງອີງຕາມຄວາມຕ້ອງການຕົວຈິງຂອງສັງຄົມ. ຄະນະສຶກສາສາດແມ່ນຄະນະທີ່ມີຜູ້ເຂົ້າຮຽນເປັນລຳດັບສອງຂອງມະຫາວິທະຍາໄລ Hamburg ຮອງຈາກຄະນະເສດຖະສາດ.
- ການຢ້ຽມຢາມ ແລະ ພົບປະກັບສະຖາບັນການຮຽນຮູ້ຕະຫຼອດຊີວິດຂອງອົງການ ຢູເນສໂກ ໄດ້ເຮັດໃຫ້ຄະນະຜູ້ແທນໄດ້ມີຂໍ້ມູນຫຼາຍກວ່າເກົ່າກ່ຽວກັບກິດຈະກຳຂອງຂອງສະຖາບັນດັ່ງກ່າວໃນການສົ່ງເສີມການຮຽນການຮຽນຮູ້ຕະຫຼອດຊີວິດ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງທາງດ້ານເຕັກນິກ ແລະ ນະໂຍບາຍການຮຽນຮູ້ຕະຫຼອດຊີວິດໃຫ້ປະເທດຕ່າງໆ. ການວັດແທກຜົນໄດ້ຮັບຈາກການຮູ້ໜັງສື ແລະ ການສຶກສາຂັ້ນພື້ນຖານ ແລະ ເຄືອຂ່າຍຂອງເມືອງແຫ່ງການຮຽນຮູ້ໂລກຂອງ ຢູເນສໂກ (UNESCO Global Network of Learning Cities).

ພາຍຫຼັງການເຂົ້າຮ່ວມປະຊຸມ ແລະ ພົບປະແລກປ່ຽນ ກັບພາກສ່ວນຕ່າງໆ ທີ່ເຮັດວຽກໃນການພັດທະນາການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ຄະນະຜູ້ແທນໄດ້ມີຂໍ້ສະເໜີສຳລັບການພັດທະນາວຽກງານການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ສຳລັບ ສປປ ລາວດັ່ງນີ້:

- ຂະແໜງການຍ່ອຍການສຶກສານອກໂຮງຮຽນສືບຕໍ່ຮ່ວມມືກັບ ຫ້ອງການດີວີວີ ໃຫ້ແໜ້ນແຟ້ນກວ່າເກົ່າ ເພື່ອຖອດຖອນບົດຮຽນ ແລະ ທົບຮອນມາຈັດຕັ້ງປະຕິບັດ ຜັນຂະຫຍາຍບັນດານິຕິກຳ, ນະໂຍບາຍ ແລະ ວິທີການໃນການພັດທະນາການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ຢູ່ ສປປ ລາວ.
- ຂະແໜງການຍ່ອຍການສຶກສານອກໂຮງຮຽນຈັດຕັ້ງ ຜັນຂະຫຍາຍດຳລັດການຮຽນຮູ້ຕະຫຼອດຊີວິດທີ່ໄດ້ຮັບການຮັບຮອງໃນປີ 2019 ໃຫ້ເປັນຮູບປະທຳ ໂດຍອາດເລີ່ມຈາກການສ້າງຕັ້ງຄະນະກຳມາທິການລະດັບຊາດ ເພື່ອຊີ້ນຳການຈັດຕັ້ງປະຕິບັດດຳລັດດັ່ງກ່າວ.
- ຫ້ອງການຄະນະກຳມາທິການແຫ່ງຊາດລາວເພື່ອຢູເນສໂກ ປະສານງານກັບສະຖາບັນການຮຽນຮູ້ຕະຫຼອດຊີວິດຂອງຢູເນສໂກ ເພື່ອມີຂໍ້ມູນໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເປັນບົດວິພາກໃນການສະໝັກເຂົ້າເປັນເຄືອຂ່າຍເມືອງແຫ່ງການຮຽນຮູ້ໂລກຂອງຢູເນສໂກ (UNESCO Global Network of Learning Cities). ຈຸດປະສົງຂອງການເຂົ້າເປັນເຄືອຂ່າຍແມ່ນເພື່ອສັງເກດການ ແລະ ຖອດຖອນບົດຮຽນນຳໄປພັດທະນາເມືອງໃນໜຶ່ງຢູ່ ສປປ ລາວ ໃຫ້ກາຍເປັນເມືອງແຫ່ງການຮຽນຮູ້.



ຜູ້ອຳນວຍການ ປະຈຳປະເທດກຳປູເຈຍ

# ພາບລວມທຳອິດກ່ຽວກັບຄວາມຍືນຍົງ ປະສົບການຈາກສູນການຮຽນຮູ້ຕະຫຼອດຊີວິດ

*Vanna Peou,* DVV International ກຳປູເຈຍ

ທ່ານ ຄຸນ ສຳຣິດ (Khun Samros), ຫົວໜ້າສູນເຍົາວະຊົນປະຈຳກຳປົງຈຳ (Kampong Cham) ເຊິ່ງຕັ້ງຢູ່ໃນໝູ່ບ້ານໃນແຂວງກຳປົງຈຳ. ລາວເຮັດວຽກຢູ່ສູນແຫ່ງນີ້ໄດ້ເກືອບປີເຄິ່ງແລ້ວ.

ໃນທ້າຍປີ 2021, ດີວີວີ ອິນເຕີເນເຊິນແນວ, ໄດ້ຮ່ວມມືກັບກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ, ກົມການສຶກສານອກໂຮງຮຽນ ແລະ ກົມສູນກາງການຄຸ້ມຄອງ ລວມທັງສູນເຍົາວະຊົນແຂວງກຳປົງຈຳ ເຮັດໂຄງການທົດລອງໃຫ້ເປັນສູນການຮຽນຮູ້ຕະຫຼອດຊີວິດ. ເມື່ອໄດ້ຮັບຂໍ້ມູນນີ້, ສຳຣິດ ສະແດງຄວາມສົນໃຈ ເນື່ອງຈາກມັນສອດຄ່ອງກັບເປົ້າໝາຍຂອງລາວໃນການດຶງດູດໃຫ້ຊາວໜຸ່ມ ແລະ ຄົນລຸ້ນໜຸ່ມເຂົ້າມາສູນຂອງລາວໃຫ້ຫຼາຍຂຶ້ນ ລວມໄປເຖິງຄວາມຕັ້ງໃຈຂອງລາວທີ່ຢາກສ້າງປະສົບການໃນສະຖານທີ່ເຮັດວຽກໃຫ້ແກ່ຄົນລຸ້ນໜຸ່ມ.

ພາຍຫຼັງທີ່ເຮັກວຽກຢູ່ສູນຊາວໜຸ່ມກຳປົງຈຳ ໄດ້ເກືອບປີເຄິ່ງ ແລະ ພາຍຫຼັງທີ່ໄດ້ຮ່ວມມືກັບ ດີວີວີ ອິນເຕີເນເຊິນແນວ ໃນປີ 2021, ທີມງານຂອງສູນຊາວໜຸ່ມແຂວງກຳປົງຈຳກໍໄດ້ຮັບໝາກຜົນອັນພົ້ນເດັ່ນເຊັ່ນ: ນຳພາທີມຝຶກອົບຮົມສຳລັບສະພາຊາວໜຸ່ມແຫ່ງກຳປູເຈຍ, ປັບໂຄງສ້າງສູນ, ຂະຫຍາຍຮ້ານກາເຟໜ້າສູນ ລວມທັງປັບປຸງພື້ນທີ່ເຮັດກະສິກຳ. ຕົວຢ່າງ: ຢູ່ສູນໄດ້ເລີ່ມປູກຜັກ ແລະ ໝາກໄມ້ ເຊັ່ນ: ຜັກກະລໍ່າ, ໝາກແຕງ, ຫົວສີໃຄ, ໝາກກ້ວຍ, ເຫັດ ແລະ ປະຈຸບັນແມ່ນໄດ້ລ້ຽງປາດຸກ. ສຳຣິດ ຍອມຮັບວ່າຢ່າງ ເບີກບານວ່າມັນເປັນຄວາມງົດງາມທີ່ລາວບໍ່ເຄີຍເຫັນມາກ່ອນ. ນອກຈາກນີ້, ລາວຍັງຢັ້ງຢືນວ່າ “ປະຈຸບັນສູນຂອງເຮົາແມ່ນຕ້ອນຮັບທຸກຄົນທີ່ຕ້ອງການມາອອກກຳລັງກາຍໃນຕອນເຊົ້າ ຫຼື ພັກຜ່ອນຈາກວຽກງານໂດຍການຍ່າງຫຼິ້ນເບິ່ງຜັກທີ່ພວກເຮົາປູກ ແລະ ປາທີ່ພວກເຮົາລ້ຽງ ແລະ ຍັງເປັນໂອກາດອັນດີສຳລັບປະຊາຊົນທີ່ຢາກສັ່ງຜັກ ແລະ ປາກັບບ້ານ”.

ສຳຣິດ ເຊື່ອວ່າການປ່ຽນຈາກສູນຊາວໜຸ່ມ ເປັນສູນການຮຽນຮູ້ຕະຫຼອດຊີວິດ ເປັນສິ່ງທີ່ລາວໄດ້ວາງແຜນໄວ້ແຕ່ຕອນເລີ່ມຕົ້ນ ເນື່ອງຈາກວ່າລາວຮູ້ດີວ່າສູນການຮຽນຮູ້ຕະຫຼອດຊີວິດເປັນພື້ນທີ່ ທີ່ທຸກຄົນສາມາດຂະຫຍາຍຄວາມສຳຄັນຂອງການຮຽນຮູ້ໂດຍການເຂົ້າຮ່ວມໄດ້ຕະຫຼອດເວລາ.

ຕັ້ງແຕ່ດຳເນີນໂຄງການທົດລອງທີ່ປ່ຽນສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມໃຫ້ເປັນສູນການຮຽນຮູ້ຕະຫຼອດຊີວິດ ມີຊາວໜຸ່ມຈຳນວນຫຼວງຫຼາຍເຂົ້າຮ່ວມ ແລະ ເຫັນວ່າເປັນໂອກາດພິເສດໃນການຝຶກ ຫຼື ຈັດກິດຈະກຳຕ່າງໆ. ຍິ່ງໄປກວ່ານັ້ນ ສູນການຮຽນຮູ້ຕະຫຼອດຊີວິດຍັງຈັດຝຶກອົບຮົມທັກສະສັງຄົມໃຫ້ແກ່ພະນັກງານຮ່ວມກັບດີວີວີ ອິນເຕີເນເຊິນແນວ, ພ້ອມທັງຝຶກອົບຮົມວົງຈອນຂອງການຄຸ້ມຄອງສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມ.

ໃນຄວາມເປັນຈິງແລ້ວ ຫົວໜ້າສູນເຍົາວະຊົນກຳປົງຈຳຮັບຮູ້ເຖິງຄວາມສຳຄັນຂອງສູນການຮຽນຮູ້ຕະຫຼອດຊີວິດ ສຳລັບຊຸມຊົນເນື່ອງຈາກສູນນີ້ໄດ້ສະໜອງການຝຶກອົບຮົມທັງທັກສະວິຊາການ ແລະ ທັກສະສັງຄົມ ໃຫ້ແກ່ຊາວໜຸ່ມ ແລະ ມີສ່ວນຊ່ວຍໃນການປ່ຽນແປງທັດສະນະຄະຕິ ແລະ ນິໄສໃນຊີວິດປະຈຳວັນຂອງພວກເຂົາ. ນອກຈາກນີ້, ສູນການຮຽນຮູ້ຕະຫຼອດຊີວິດຍັງເປັນສະຖານທີ່ ທີ່ນັກສຶກສາດ້ານກະສິກຳສາມາດລົງມືປະຕິບັດຕົວຈິງ ພາຍຫຼັງທີ່ເຂົາເຈົ້າໄດ້ຮຽນພາກທິດສະດີ. ສຳຣິດ ເນັ້ນໜັກວ່າຊີວິດຂອງລາວປ່ຽນແປງໄປແນວໃດ ຕັ້ງແຕ່ສູນໄດ້ຮັບການປ່ຽນແປງໃໝ່, ເຊັ່ນ: ປ່ຽນແນວຄວາມຄິດຂອງລາວໃນການປະຕິບັດ, ການຕັດສິນໃຈໃນທີມ, ສະແດງອອກໃນການເບິ່ງແຍງຄຸ້ມຄອງສະຖານທີ່. ດັ່ງນັ້ນ, ລາວຈຶ່ງຍອມຮັບວ່າຄຸນຄ່າສ່ວນລວມສຳລັບຊຸມຊົນແມ່ນຫຼາຍກວ່າທີ່ຜ່ານມາ.



ທ່ານ ຄຸນ ສຳຣິດ (Khun Samros), ຫົວໜ້າສູນເຍົາວະຊົນ ປະຈຳກຳປົງຈຳ (Kampong Cham) ແລະ ສວນຜັກ ໃນສູນການຮຽນຮູ້ຕະຫຼອດຊີວິດ



ເຫັດ ຜົນຜະລິດຈາກສູນເຍົາວະຊົນ ປະຈຳກຳປົງຈຳກຳປົງຈຳ (Kampong Cham)

ຄວາມຄາດຫວັງຂອງລາວໃນໄລຍະ 3 ປີ ຂ້າງໜ້າ ຂອງສູນການຮຽນຮູ້ຕະຫຼອດຊີວິດຂອງແຂວງກຳປົງຈຳ ແມ່ນສຸມໃສ່ການສ້າງໃຫ້ເປັນສະຖານທີ່ບໍລິການຊາວໜຸ່ມໃນຊຸມຊົນຢ່າງເຕັມຮູບແບບ, ໝາຍຄວາມວ່າ ຊາວໜຸ່ມຈະມີທາງເລືອກຫຼາຍຂຶ້ນໃນການຍົກລະດັບທັກສະໂດຍອີງໃສ່ຜົນປະໂຫຍດຂອງພວກເຂົາ.

ນອກນີ້, ສູນດັ່ງກ່າວຈະໄດ້ຫັນປ່ຽນໄປເປັນ "ສູນສີຂຽວ" ຄື ເປັນສູນທີ່ເຕັມໄປດ້ວຍພືດຜັກ. ໃນຖານະຫົວໜ້າສູນ, ສຳຣິດ ມີຄວາມຕັ້ງໃຈທີ່ຈະເຮັດວຽກຢ່າງໜັກ ເພື່ອໃຫ້ສູນການຮຽນຮູ້ຕະຫຼອດຊີວິດ ປະສົບຜົນສຳເລັດ ແລະ ມີຄວາມຫ້າວຫັນຫຼາຍເທົ່າທີ່ຈະເປັນໄດ້.

ສຸດທ້າຍ, ລາວໄດ້ຮັບການສະໜັບສະໜູນຈາກບັນດາພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນ ດີວີວີ ອິນເຕີເນເຊິນແນວ, ບັນດາຄູ່ຮ່ວມພັດທະນາທີ່ບໍ່ຂຶ້ນກັບລັດຖະບານ ແລະ ຊຸມຊົນຄູ່ຮ່ວມພັດທະນາ, ໂດຍຫວັງວ່າສູນດັ່ງກ່າວຈະສະໜອງການບໍລິການໃຫ້ແກ່ຊາວໜຸ່ມຕະຫຼອດເຖິງຊຸມຊົນອ້ອມຂ້າງ.

# ການມີສ່ວນຮ່ວມຂອງ ASPBAE ໃນກອງປະຊຸມສຸດຍອດການຫັນປ່ຽນການສຶກສາ: ຂະບວນການທາງດ້ານການເມືອງທີ່ສຳຄັນ ເພື່ອໃຫ້ SDG4 ກັບຄືນສູ່ແລວທາງ

*Maria Helen Dabu,* ASPBAE

ຈຸດກຳເນີດ ແລະ ຈຸດປະສົງໂດຍລວມຂອງກອງປະຊຸມສຸດຍອດ ການຫັນປ່ຽນການສຶກສາ (Transforming Education Summit (TES)) ສາມາດລວບລວມໄດ້ຈາກບົດລາຍງານວາລະປະຊຸມຮ່ວມທີ່ສຳນະເໜີໂດຍເລຂາທິການຂອງສະຫະປະຊາຊາດ (UNSG), ທ່ານ Antonio Guterres ໄດ້ກ່າວຕໍ່ກອງປະຊຸມສະຫະປະຊາຊາດໃນເດືອນກັນຍາ 2021 ເຊິ່ງທ່ານໄດ້ກ່າວວ່າ:

*"…ຂ້າພະເຈົ້າສະສະໜັບສະໜູນການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ ແລະ ຈັດ ກອງປະຊຸມສຸດຍອດການຫັນປ່ຽນການສຶກສາ ໃນປີ 2022 ເພື່ອເລັ່ງລັດຄືບກ້າວໜ້າສູ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍ 4…"*




TES ເປັນຂະບວນການທາງການເມືອງທີ່ສຳຄັນໃນປີ 2022, ທີ່ດຳເນີນການໂດຍ UNSG ເພື່ອຍົກລະດັບການສຶກສາໃຫ້ຢູ່ໃນລຳດັບຕົ້ນໆ ຂອງວາລະທາງການເມືອງໃນລະດັບໂລກຂອງລັດຖະບານ. ຈາກການເລີ່ມຕົ້ນຂະບວນການຂອງກອງປະຊຸມສຸດຍອດໃນຕົ້ນປີ 2022, ກອງປະຊຸມ ກ່ອນກອງປະຊຸມສຸດຍອດໄດ້ຈັດຂຶ້ນທີ່ນະຄອນປາຣີ (Paris) ໃນເດືອນມິຖຸນາ ແລະ ຈົນເຖິງກອງປະຊຸມສຸດຍອດໃນລະດັບສູງຂອງກອງປະຊຸມສະມັດຊາໃຫຍ່ແຫ່ງສະຫະປະຊາຊາດຄັ້ງທີ 77 ໃນນະຄອນນິວຢອກ (New York) ໃນວັນທີ 16-17 ແລະ 19 ກັນຍາ 2022, ສະມາຄົມເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ໃນອາຊີປາຊີຟິກໃຕ້ (ASPBAE) ເຊິ່ງເປັນຄູ່ຮ່ວມພັດທະນາທີ່ມີມາແຕ່ເຫິງນານ ໃນລະດັບພາກພື້ນ ຂອງ ດີວີວີ ອິນເຕີເນເຊິນແນວ ໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການ ແລະ ການປຶກສາຫາລືໃນລະດັບຊາດ, ລະດັບພາກພື້ນ ແລະ ທົ່ວໂລກ ເພື່ອໃຫ້ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍ 4 (SDG4) ກັບຄືນສູ່ແລວທາງ ໂດຍຜ່ານ TES. ASPBAE ສະແດງຄວາມຄິດເຫັນທີ່ໜັກແໜ້ນຂອງພາກປະຊາສັງຄົມໃນພາກພື້ນອາຊີປາຊີຟິກ ໂດຍສະເພາະຈາກປະເທດທີ່ກຳລັງພັດທະນາ ແລະ ຮຽກຮ້ອງໃຫ້ມີການປ່ຽນແປງຢ່າງແທ້ຈິງໃນການສົ່ງມອບເປົ້າໝາຍ SDG4 ທີ່ຖືກປະລະ ຕັ້ງແຕ່ໃນລະດັບຊາດ ໄປຈົນເຖິງລະດັບສາກົນ, ໃນຂອບເຂດວາລະ ທີ່ອີງໃສ່ສິດທິການສຶກສາ, ການສຶກສາຈາກລຸ້ນສູ່ລຸ້ນ, ຂ້າມລຸ້ນ, ການຮັກສາສະພາບພູມອາກາດ ແລະ ເພດສະພາບ.



ບັນດາຄູ-ອາຈານ, ຊາວໜຸ່ມ ແລະ ຜູ້ຕາງໜ້າບັນດາອົງການຈັດຕັ້ງສັງຄົມເຂົ້າຮ່ວມກອງປະຊຸມສຸດຍອດການຫັນປ່ຽນການສຶກສາ.

ຮ່ວມກັບ Global Campaign for Education (GCE), ASPBAE ຍັງເປັນຕົວແທນຂອງພາກປະຊາສັງຄົມໃນຄະນະກຳມາທິການທີ່ປຶກສາ ຂອງ TES ເຊິ່ງເປັນສ່ວນໜຶ່ງຂອງຂອງກຸ່ມທີ່ປຶກສາຮ່ວມ ຂອງອົງການຈັດຕັ້ງສາກົນດ້ານການສຶກສາ 2030 ຂອງ ຢູເນສໂກ (CCNGO Ed2030), ເຊິ່ງ ດີວີວີ ອິນເຕີເນເຊິນແນວ ກໍແມ່ນສະມາຊິກ.

ກອງປະຊຸມສຸດຍອດນີ້ຈັດຂຶ້ນໃນຊ່ວງເວລາວິກິດ ເມື່ອມີການແຜ່ລະບາດຂອງໂຄວິດ-19 ແລະ ຄວາມທ້າທາຍໃນ ດ້ານອື່ນໆ ເຊິ່ງໄດ້ເຮັດໃຫ້ວຽກການການສຶກສາພົບພໍ້ກັບຄວາມຫຍຸ້ງຍາກທີ່ບໍ່ເຄີຍມີມາກ່ອນ, ອີກບໍ່ຮອດທົດສະວັດຈະເຖິງ ປີ 2030 ເປົ້າໝາຍ SDGs ໃນນັ້ນລວມທັງ SDG4, ຈະບັນລຸຜົນສໍາເລັດ.

ໃນລະຫວ່າງວັນແກ້ໄຂ ຂອງກອງປະຊຸມ TES (17 ກັນຍາ) ທີ່ສໍານັກງານໃຫຍ່ສະຫພປະຊາຊາດໃນນະຄອນນິວຢອກ, ທ່ານເລຂາທິການຂອງສະມາຄົມ ASPBAE, ທ່ານ ນາງ Helen Dabu, ໄດ້ກ່າວເຖິງຊ່ອງຫວ່າງ ແລະ ກາລະໂອກາດຂອງກົນໄກດ້ານງົບປະມານຈາກພາຍນອກເພື່ອການສຶກສາໃນຫົວຂໍ້ 'ສັງເກດການງົບປະມານການສຶກສາ: ການວາງຮາກຖານສໍາລັບການຈັດຫາງົບປະມານທີ່ຍືນຍົງ ,ຍຸດຕິທຳ ແລະ ລວມສູນ'.

ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໂດຍ GCE ຮ່ວມກັບ CCNGO Ed2030, ລັດຖະບານມາລາວີ, ລັດຖະບານອາເຈນຕິນາ, ສໍານັກງານອາຣັບເພື່ອການສຶກສາ (Arab Bureau of Education for the Gulf States (ABEGS)), ASPBAE, Arab Campaign for Education (ACEA), CLADE (Latin America), ANCEFA (Africa Network Campaign on Education For All), European and North American Campaign for Education (ENACE), Education International, ແລະ ActionAid.

ທ່ານນາງ Helen Dabu ໄດ້ເນັ້ນໜັກວ່າມັນເປັນສິ່ງສໍາຄັນສໍາລັບວາລະການຈັດຫາງົບປະມານຈາກພາຍນອກເພື່ອການສຶກສາ ເພື່ອສະໜັບສະໜູນໜຶ່ງໃນເປົ້າໝາຍ ຂອງ TES, ເຊິ່ງແມ່ນການຟື້ນຟູຄວາມພະຍາຍາມລະດັບຊາດ ແລະ ລະດັບໂລກ ເພື່ອບັນລຸ SDG4. ເພິ່ນໄດ້ຮຽກຮ້ອງໃຫ້ລັດຖະບານຕ່າງໆ ໃຫ້ຄໍາໝັ້ນສັນຍາຢ່າງຈິງຈັງໃນການສະຫຼຸບຄວາມພະຍາຍາມຂອງພວເຂົາໃນການບັນລຸເປົ້າໝາຍ SDG4 ທີ່ໄດ້ ຮັບການເອົາໃຈໃສ່ໜ້ອຍທີ່ສຸດເຊັ່ນ: ການຮູ້ໜັງສື, ການເບິ່ງແຍງເດັກກ່ອນໄວຮຽນ ແລະ ການສຶກສາ (ECCE), ການສຶກສາຮຽນຮ່ວມ ແລະ ການສຶກສາຂອງຄົນພິການ, ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ລວມທັງຄໍາໝັ້ນສັນຍາຫຼ້າສຸດ ທີ່ເຮັດໄວ້ໃນຂອບແຜນປະຕິບັດງານມາຣາເກັດ (CONFINTEA VII Marrakech Framework for Action), ການສຶກສາສໍາລັບແມ່ຍິງ ແລະ ເດັກຍິງ, ການສະໜັບສະໜູນຄູສອນ, ການສຶກສາ ເພື່ອເປັນພົນລະເມືອງໂລກ ແລະ ການສຶກສາເພື່ອການພັດທະນາແບບຍືນຍົງ ແລະ ອື່ນໆ.

ກົນໄກການຕິດຕາມຜົນຂອງ TES ສໍາລັບການປະຕິບັດ ແລະ ຕິດຕາມຜົນໄດ້ຮັບຈະຖືກດໍາເນີນໂດຍຜ່ານຄະນະກໍາມາທິການຂັບເຄື່ອນລະດັບສູງ (SDG4 High Level Steering Committee (HLSC)). ASPBAE ແລະ GCE ທີ່ເປັນຕົວ ແທນຂອງ CCNGO Ed2030 ປະຈຸບັນມີບ່ອນນັ່ງ (ໄລຍະ 2022-2023) ໃນການຕິດຕາມ ແລະ ໂຄງສ້າງການປະສານງານ SDG4 ໃນທົ່ວໂລກ. ໃນການເປັນຕົວແທນນີ້ ແລະ ຂະບວນການປະສານງານໃນລະດັບຊາດ ແລະ ລະດັບພາກພື້ນທີ່ກ່ຽວຂ້ອງ ASPBAE ຈະຍັງຄົງປົກປັກຮັກສາ ແລະ ປ້ອງກັນວາລະຂອງ SDG4 ແລະ ສິດທິໃນການສຶກສາຂອງເດັກ, ຊາວໜຸ່ມ ແລະ ຜູ້ໃຫຍ່.

# ກໍລະນີສຶກສາ: ການຮຽນ ແລະ ການສອນ ໄປພ້ອມກັບ ສູນການຮຽນຮູ້ຊຸມຊົນເຄື່ອນທີ່

*Vanna Peou,* DVV International ກຳປູເຈຍ

ໃນອະດີດ, ມັນເປັນເລື່ອງຍາກສຳລັບ ນາງ Hich Sou Khit ທີ່ຕ້ອງອາໃສຢູ່ໃນກຸ່ມກະສິກອນທີ່ຢູ່ຫ່າງໄກຈາກໝູ່ບ້ານຂອງລາວ. ຕອນນັ້ນ, ລາວບໍ່ຮູ້ໜັງສື ແລະ ບໍ່ຮູ້ວ່າຈະຂາຍເມັດໝາກມ່ວງຫິມມະພານແນວໃດ ຫຼື ຈະໄປໂຮງຮຽນແນວໃດ.



ຊື່: Hich Sou Khit
ອາຍຸ: 16 ປີ
ອາໃສຢູ່ໃນໝູ່ບ້ານ ກາງໜອກ (Kang Nork), ຊຸມຊົນ ເວີນໃຊ, ເມືອງເວີນໃຊ, ແຂວງຣັດຕະນະຄີຣີ.

"ໃນປີ 2017, ຂ້ອຍໄດ້ໄປໂຮງຮຽນ ເພື່ອເຂົ້າຮຽນຊັ້ນປະຖົມ ປໍ. 2 ໃນໝູ່ບ້ານຂອງຂ້ອຍ", ລາວວ່າ. "ການຮ່ຳຮຽນຂອງຂ້ອຍໃຊ້ເວລາພຽງ 3 ເດືອນ ຕໍ່ປີ ແລະ ຂ້ອຍກໍອ່ານອອກຂຽນໄດ້ບໍ່ຫຼາຍປານໃດ" ລາວເວົ້າຕໍ່ ໃນປີ 2019 ລະຫວ່າງທີ່ລາວຢູ່ໃນ Chamkar (ໃນທົ່ງນາ) ລາວໄດ້ຮຽນຮູ້ທີ່ຈະອ່ານ ແລະ ຂຽນໄດ້ຫຼາຍສົມຄວນ.

ໃນປີ 2020 ຊຸມຊົນໄດ້ຄັດເລືອກຄູອາສາສະໝັກສຳລັບສູນການຮຽນຮູ້ຊຸມຊົນເຄື່ອນທີ່ (MCLC) ເພື່ອການຮຽນຮູ້ຂອງຊຸມຊົນເຊິ່ງຈັດຕັ້ງໂດຍໂຄງການNTFPທີ່ສະໜັບສະໜູນໂດຍຫ້ອງການດີວີວີອິນເຕີເນເຊິນແນວ. ໃນເວລານັ້ນ, ລາວໄດ້ຕົກລົງປະຕິບັດໜ້າທີ່ເປັນຄະນະກຳມະການຂອງ ສູນການຮຽນຮູ້ຊຸມຊົນເຄື່ອນທີ່ Cheong Chhim Leu ໃນໝູ່ບ້ານກາງໜອກ ເຊິ່ງເປັນຕຳແໜ່ງໃນປະຈຸບັນຂອງລາວ.

ນາງເວົ້າວ່າ: "ຂ້ອຍສອນເດັກນ້ອຍເທື່ອລະບາດກ້າວ ແລະ ຂ້ອຍສືບຕໍ່ຮຽນໃນໂຮງຮຽນຂອງລັດດ້ວຍຕົນເອງ".

ປະຈຸບັນ, ລາວກຳລັງຮຽນຢູ່ຊັ້ນ ມໍ.3 ຢູ່ທີ່ໂຮງຮຽນມັດທະຍົມ ເວີນໃຊ ເພື່ອເປັນການເພີ່ມພູນຄວາມຮູ້ໃຫ້ແກ່ຕົນເອງໃນອະນາຄົດ. ລາວເປັນຄູອາສາສະໝັກທີ່ບໍ່ມີເງິນເດືອນ.

ເມື່ອເຫັນເຖິງຄວາມລຳບາກຂອງການບໍ່ຮູ້ໜັງສືຂອງຊຸມຊົນ ລາວຈຶ່ງໄດ້ເອົາໃຈໃສ່ໃນການສະໜັບສະໜູນເດັກນ້ອຍ ແລະ ຊາວໜຸ່ມໃນເຂດຫ່າງໄກສອກຫຼີກໃຫ້ໄດ້ຮຽນ.

ປະຈຸບັນນີ້ລາວຕັ້ງເປົ້າໝາຍຮຽນ ໃຫ້ຈົບ ມໍ.4, ແລະ ອາຊີບໃນຝັນຂອງລາວແມ່ນໄດ້ເປັນພະນັກງານໃນອົງກອນ ເພື່ອ ຫາລາຍໄດ້ ແລະ ສຶກສາຕໍ່.

"ໂຄງການ NTFP ສຳລັບສູນການຮຽນຮູ້ຊຸມຊົນເຄື່ອນທີ່ ໄດ້ຊ່ວຍພັດທະນາໃຫ້ຊຸມຊົນມີຄວາມຮູ້ ສຳລັບຜູ້ທີ່ບໍ່ມີໂອກາດໃນການສຶກສາ. ມັນເປັນພື້ນຖານໃນການເຂົ້າໂຮງຮຽນຂອງພາກລັດໃນທົ່ວທຸກແຫ່ງ" Hich Sou Khit ເວົ້າ.

ລາວເສີມຕື່ມດ້ວຍຄວາມດີໃຈ "ຂ້ອຍຢາກຈະບອກກັບຊຸມຊົນໂດຍສະເພາະຊາວໜຸ່ມວ່າຄວາມຮູ້ເປັນສິ່ງສຳຄັນຫຼາຍສຳລັບທຸກຄົນມັນສາມາດປ່ຽນຄວາມຄິດຂອງເຮົາໄດ້".

"ສຸດທ້າຍນີ້, ຂ້ອຍຂໍຂອບໃຈຜູ້ສະໜັບສະໜູນໂຄງການ Sternsingers, ດີວີວີ ອິນເຕີເນເຊິນແນວ ແລະ NTFP ທີ່ໃຫ້ການສະໜັບສະໜູນດ້ານງົບປະມານ ແລະ ຄວາມຮູ້ແກ່ຊຸມຊົນ. ພວກເຮົາຫວັງວ່າຈະໄດ້ຮັບການສະໜັບສະໜູນຕໍ່ໄປໃນອະນາຄົດ", ລາວເວົ້າຢ່າງມີຄວາມຫວັງ.

*ຂ້ອຍຢາກຈະບອກກັບຊຸມຊົນ ໂດຍສະເພາະຊາວໜຸ່ມວ່າຄວາມຮູ້ ເປັນສິ່ງສຳຄັນຫຼາຍສຳລັບທຸກຄົນ ມັນສາມາດປ່ຽນຄວາມຄິດ ຂອງເຮົາໄດ້*



# ການປ່ຽນແປງໃນທາງບວກເກີດຂຶ້ນກັບປະຊາຊົນ ໂດຍຜ່ານການລິເລີ່ມທີ່ຍິ່ງໃຫຍ່

*ເຫຼັກໄຫຼ ສຸດທະວິໄລ*, DVV International



*ຜູ້ບໍລິຫານໂຄງການ ປະຈຳຫ້ອງການພາກພື້ນ*

ສະບາຍດີ, ຂ້ອຍຊື່ ຊື່ ເຫຼັກໄຫຼ ສຸດທະວິໄລ ແລະ ໄດ້ເຂົ້າຮ່ວມງານຢູ່ ດີວີວີ ອິນເຕີເນເຊິນແນວ ໃນເດືອນກັນຍາ 2022. ໃນຖານະທີ່ເປັນນ້ອງໃໝ່, ຂ້ອຍພູມໃຈທີ່ໄດ້ເປັນໜຶ່ງໃນທີມງານຂອງຄອບຄົວທີ່ແສນພິເສດນີ້, ເພາະວ່າ ດີວີວີ ອິນເຕີເນເຊິນແນວ ເປັນຜູ້ມີບົດບາດສຳຄັນໃນວຽກງານການສຶກສາຜູ້ໃຫຍ່ ເຊັ່ນດຽວກັນກັບວຽກງານການສຶກສານອກໂຮງຮຽນ ໃນ ສປປ ລາວ ແລະ ພາກພື້ນ. ໃນຄວາມເປັນຈິງແລ້ວ ດີວີວີ ອິນເຕີເນເຊິນແນວ ສະໜັບສະໜູນໂຄງການພັດທະນາການສຶກສາຜູ້ໃຫຍ່ໃນທຸກຂັ້ນ ນັບແຕ່ຂັ້ນສູນກາງຈົນເຖິງຂັ້ນທ້ອງຖິ່ນ, ສ້າງໂອກາດການຮຽນຮູ້ທີ່ມີຄວາມໝາຍໃນທົ່ວປະເທດ ເພື່ອເຮັດໃຫ້ເກີດການປ່ຽນແປງທີ່ຍືນຍົງສຳລັບປະຊາຊົນ.

ໃນໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ທີ່ຂ້າພະເຈົ້າຮັບຜິດຊອບ, ຫຼັກສູດແມ່ນໄດ້ຖືກອອກແບບ ແລະ ພັດທະນາຮ່ວມກັບໜ່ວຍງານຂອງພາກລັດ ໂດຍສະເພາະແມ່ນກັບກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ. ໃນໄລຍະທຳອິດຂອງການປະຕິບັດໜ້າທີ່ຂອງຂ້ອຍທີ່ຫ້ອງການ ດີວີວີ, ຂ້ອຍເລີ່ມຈາກການອ່ານ ແລະ ສຶກສາຫຼັກສູດເປັນສ່ວນຫຼາຍ ເຊິ່ງຂ້ອຍພົບວ່າຫຼັກສູດແມ່ນມີຄວາມກ່ຽວຂ້ອງສູງ ຍ້ອນວ່າມັນສາມາດຕອບສະໜອງຕໍ່ຄວາມຕ້ອງການທີ່ແທ້ຈິງຂອງປະຊາຊົນລາວ ໂດຍສະເພາະໃນຊຸມຊົນທີ່ດ້ອຍໂອກາດ. ດ້ວຍປະສົບການ 10 ກວ່າປີ ໃນດ້ານວິຊາສະເພາະ ນັກການສຶກສາ ແລະ ພັດທະນາໃນລະບົບສາມັນໂດຍສະເພາະຫຼັກສູດພື້ນຖານ, ຄູສອນ ແລະ ທີ່ປຶກສາດ້ານການພັດທະນາຂີດຄວາມສາມາດຂອງນັກການສຶກສາ ແລະ ສະໜັບສະໜູນ - ຕອນນີ້ຂ້າພະເຈົ້າຈະຮຽນຮູ້ເພີ່ມຕື່ມຈາກໂຄງການທີ່ຂ້ອຍກຳລັງດຳເນີນການ, ການສຶກສາຜູ້ໃຫຍ່ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ- ແລະ ໂຄງການອື່ນໆ ຂອງ ດີວີວີ ແລະ ຈະໃຊ້ມັນເປັນໂອກາດໃນການແບ່ງປັນປະສົບການລະດັບມືອາຊີບ ໃນການສ້າງແຜນງານທີ່ມີຄຸນນະພາບ ແລະ ເພື່ອໃຫ້ເກີດໝາກຜົນທີ່ດີທີ່ສຸດແກ່ກຸ່ມເປົ້າໝາຍໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

ສຳລັບໂຄງການການສຶກສາຜູ້ໃຫຍ່ ແລະ ການສ້າງຄວາມເຂັ້ມແຂງແກ່ແມ່ຍິງ ຂ້າພະເຈົ້າຮ່ວມມືກັບກົມການສຶກສານອກໂຮງຮຽນ ແລະ ສູນພັດທະນາການສຶກສານອກໂຮງຮຽນ ໃນການພັດທະນາຄູ່ມືນະວັດຕະກຳສຳລັບແມ່ຍິງ, ຂ້າພະເຈົ້າມີຈຸດປະສົງໃນການພັດທະນາຄູຝຶກຫຼັກໃນຫົວຂໍ້ການສ້າງຄວາມເຂັ້ມແຂງແກ່ແມ່ຍິງໃນວຽກງານການສຶກສານອກໂຮງຮຽນ. ຄູ່ມືນີ້ຈະເປັນແນວທາງທີ່ດີສຳລັບຜູ້ຈັດຝຶກອົບຮົມໃນການອອກແບບ ແລະ ດຳເນີນກິດຈະກຳເສີມສ້າງຄວາມອາດສາມາດສຳລັບບຸກຄົນທີ່ມີວິທີການຮຽນຮູ້ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ. ຄົນໃນຊຸມຊົນສາມາດຮຽນຮູ້ໄດ້ໂດຍກົງ ແລະ ມີປະສິດທິພາບຈາກສູນການຮຽນຮູ້ຊຸມຊົນໃນບ້ານຂອງເຂົາເຈົ້າ ແລະ ຍັງສາມາດແບ່ງປັນທັກສະ ແລະ ຄວາມຮູ້ກັບໝູ່ເພື່ອນ ແລະ ຄອບຄົວຂອງພວກເຂົາເພື່ອການປັບປຸງ ແລະ ພັດທະນາຕໍ່ໄປ.

ເຖິງແມ່ນວ່າຈະມີອຸປະສັກທາງກາຍະພາບ, ເສດຖະກິດ, ສັງຄົມ ແລະ ຮີດຄອງປະເພນີ ຂັດຂວາງເດັກຍິງ ແລະ ແມ່ຍິງບໍ່ໃຫ້ເຂົ້າເຖິງ ແລະ ໄດ້ຮັບໂອກາດທາງການສຶກສາ ແລະ ການຮຽນຮູ້, ຂ້ອຍມີຄວາມເຊື່ອຢ່າງຍິ່ງວ່າ ດ້ວຍການສະໜັບສະໜູນອັນດີຈາກທີມ ດີວີວີ ທີ່ຮ່ວມກັນພັດທະນາຫຼັກສູດ ແລະ ການສະໜັບສະນູນຈາກລັດຖະບານລາວ, ຄົນໃນຊຸມຊົນສາມາດເຮັດໜ້າທີ່ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແລະ ສາມາດກ້າວໄປສູ່ອະນາຄົດທີ່ສົດໃສຂອງຕົນເອງ ແລະ ເພື່ອຄວາມເປັນຢູ່ທີ່ດີຂອງປະເທດ.



ຮ່ວມກັບທີມງານ NFEDC ແລະ NFE ໃນຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຝຶກອົບຮົມໃນບ້ານເປົ້າໝາຍໃນແຂວງຫຼວງພະບາງ



ຜູ້ບໍລິຫານໂຄງການ ປະຈຳຫ້ອງການພາກພື້ນ

# ນຳໃຊ້ Edapp (Education app) ຄວບຄູ່ກັບການຮຽນການສອນຂອງລະບົບການສຶກສານອກໂຮງຮຽນ

*ປາກູລີ ໄຊຍະຊ່າງ*, DVV International Laos

ຈາກຜົນການວິໄຈປີ 2021 ໃນຫົວຂໍ້ ສຶກສາຄວາມເປັນໄປໄດ້ໃນການຮຽນການສອນ ອອນລາຍຂອງລະບົບ ການສຶກສານອກໂຮງຮຽນໃນ ສປປ ລາວ, ສະແດງໃຫ້ເຫັນວ່າເປັນໄປໄດ້ເຊິ່ງມີເຖິງ 95% ຂອງກຸ່ມເປົ້າໝາຍທີ່ສາມາດເຂົ້າເຖິງອິນເຕີເນັດ ແລະໃນນັ້ນຈຸດປະສົງຫຼັກແມ່ນໃຊ້ສື່ສານ ແລະ ຮຽນຮູ້ສິ່ງໃໝ່ໆ.

ຢູ່ໃນ ສປປ ລາວ, ການຮຽນການສອນອອນລາຍເປັນຮູບແບບໃໝ່ສຳລັບການສຶກສາໃນ ແລະ ນອກໂຮງຮຽນ, ແລະ ມັນໄດ້ເລີ່ມແຕ່ໄລຍະທີ່ເກີດວິກິດໂຄວິດ19ເປັນຕົ້ນມາ ເພາະໂຄວິດລະບາດແລ້ວເຮັດໃຫ້ໂຮງຮຽນຕ້ອງປິດ, ບໍ່ສາມາດພົບກັນເຊິ່ງໜ້າ ແລະ ໂດຍທີ່ພວກເຮົາບໍ່ໄດ້ກຽມການຮັບມືມາກ່ອນ.

ໃນອະນາຄົດທຸກຄົນບໍ່ສາມາດຄາດການໄດ້ວ່າຈະມີ ສິ່ງທ້າທ້າຍ ຫຼື ຈະມີວິດກິດອັນໃດເກີດຂຶ້ນ. ແຕ່ເພື່ອໃຫ້ການສຶກສານອກໂຮງຮຽນ(ກສນ) ສາມາດດຳເນີນການຮຽນການສອນຢ່າງຕໍ່ເນື່ອງ, ແລະ ເພື່ອຮັບປະກັນວ່າກຸ່ມເປົ້າໝາຍສາມາດເຂົ້າເຖິງການສຶກສາໄດ້ຫຼາຍຂຶ້ນ, ຫ້ອງການດີວີວີ ອິນເຕີເນເຊີນແນວ ຈຶ່ງໄດ້ສະໜັບສະໜູນເຄື່ອງມື Digital ເຊິ່ງເອີ້ນວ່າ Edapp ຫຼື Education app, ມີຈຸດປະສົງສອນທົດລອງໃນວິຊາຟີຊິກສາດຂອງຊັ້ນ ມ 7 ແລະ ວິຊາພາສາອັງກິດຂອງຊັ້ນ ມ 7 ລະບົບບຳລຸງ ທີ່ສູນພັດທະນາການສຶກສານອກໂຮງຮຽນ ໃນສົກຮຽນ 2022-2023, ພາຍຫຼັງ ການສອນທົດລອງແລ້ວຫາກເຫັນວ່າແທດເໝາະກັບກຸ່ມເປົ້າໝາຍແມ່ນອາດຈະມີແຜນນຳໃຊ້ Edapp ນີ້ຄວບຄູ່ກັບການຮຽນການສອນບຳບຸງຍົກລະດັບຂອງ ກສນ. Edapp ນີ້ເປັນເຄື່ອງມືໜຶ່ງທີ່ສາມາດເອົາບົດຮຽນເຂົ້າໃນໄດ້ຫຼາຍຮູບແບບເຊັ່ນ: ພາວເວີເພີຍ, ວິດີໂອ ແລະ ຍັງສາມາດອອກແບບກິດຈະກຳຕາມວິຊາຮຽນນັ້ນໆ ໂດຍສະເພາະແມ່ນການກຳນົດຮູບແບບກິດຈະກຳທີ່ມີການໂຕ້ຕອບ, ສຳຄັນໄປກວ່ານັ້ນແມ່ນຍັງເປັນເຄື່ອງມືໜຶ່ງທີ່ສາມາດເກັບກຳຂໍ້ມູນຂອງນັກຮຽນລະອຽດທີ່ເຂົ້າມາຮຽນໃນແຕ່ລະບົດນັ້ນນ້ອຍຫຼາຍສ່ຳໃດ.

ສຳລັບຮູບແບບ ແລະ ວິທີການນຳໃຊ້ເຄື່ອງມື (Edapp) ແມ່ນກ່ອນອື່ນໝົດຄູສອນແຕ່ງບົດສອນໃນແຕ່ລະວິຊາໃວ້ໃນ Edapp ແລ້ວຈະໃຫ້ນັກຮຽນເຂົ້າໄປຮຽນບົດຮຽນຜ່ານ Edapp ແລະ ຄວບຄູ່ກັບການມາພົບຄູປະຈຳວິຊາຢູ່ຫ້ອງຮຽນເປັນໄລຍະຕາມການນັດໝາຍເພື່ອໃຫ້ຄູ ແລະ ນັກຮຽນໄດ້ມີໂອກາດຖາມ-ຕອບຂໍ້ຄ້ອງໃຈຕ່າງໆ, ວິທີນີ້ອາດຈະເໝາະສົມແກ່ກຸ່ມເປົ້າໝາຍຂອງ ກສນ ເພາະສ່ວນຫຼາຍແລ້ວກຸ່ມເປົ້າໝາຍແມ່ນຜູ້ທີ່ອອກໂຮງຮຽນເຊັ່ນ: ຊາວໜຸ່ມທີ່ປະລະການສຶກສາ-ປະຊາຊົນ, ແລະພະນັກງານໃນໂຮງງານຕັດຫຍິບຕ່າງໆ ເຊິ່ງກຸ່ມຄົນເຫຼົ່ານັ້ນຈະຕ້ອງຫາລາຍໄດ້ເພື່ອລ້ຽງຊີບແລ້ວຈະມີເວລາໜ້ອຍໃນການມານັ່ງຮຽນເປັນໄລຍະຍາວ.

ເຖິງແນວໃດກໍ່ຕາມ ການຝຶກນຳໃຊ້ Edapp ນີ້ແມ່ນເຫັນວ່າມັນຍັງເປັນສິ່ງທີ່ໃໝ່ໆ ແລະ ທ້າທາຍຫຼາຍສຳລັບຄູສອນເພາະໃນ Edapp ສ່ວນໃຫ່ຍຈະໃຊ້ພາສາອັງກິດ, ແລະ ການອອກແບບກິດຈະກຳຂອງບົດຮຽນຍັງມີຄວາມຫຍຸ້ງຍາກເຊັ່ນ: ເຄື່ອງມືໃນ Edapp ສ່ວນຫຼາຍເໝາະສົມກັບການອອກແບບກິດຈະກຳຂອງບັນວິຊາເຊັ່ນ: ວິຊາສາຍສັງຄົມ, ແລະ ພາສາອັງກິດເທົ່ານັ້ນ, ສຳລັບວິຊາສາຍທຳມະຊາດແມ່ນຍັງພົບສິ່ງທ້າທາຍຫຼາຍໃນການຂຽນສູດຄິດໄລ່ຕ່າງໆ.

ເວົ້າລວມແລ້ວ ໃນອະນາຄົດ ກສນ ແລະ ຫ້ອງການດີວີວີອິນເຕີເນເຊີນແນວ ຍັງມີແຜນພັດທະນາ app ດັ່ງກ່າວ ແລະ ຝຶກອົບຮົມໃຫ້ກັບຄູໃນກຸ່ມເປົ້າໝາຍຢູ່ຕ່າງແຂວງອີກດ້ວຍ.

ຕົວຢ່າງໜ້າຕາ ຂອງ EdApps homepage



# ຂໍ້ຄວາມຈາກ ຜູ້ອຳນວຍການໃຫຍ່ ອົງການ ອຸຍເນສໂກ ເນື່ອງໃນໂອກາດວັນສາກົນແຫ່ງການຮູ້ໜັງສື 8 ກັນຍາ 2022

ວັນສາກົນແຫ່ງການຮູ້ໜັງສືເປັນໂອກາດອັນດີ ໃນການປະເມີນຄວາມກ້າວໜ້າ ແລະ ກະຕຸ້ນ ເພື່ອເປັນການສະເຫຼີມສະຫຼອງການຮຽນຮູ້ໜັງສື ເຊິ່ງແມ່ນສິດທິມະນຸດທີ່ສຳຄັນ ທີ່ມີບົດບາດພື້ນຖານໃນສັງຄົມຂອງພວກເຮົາ.

ແທ້ຈິງແລ້ວ, ຫາກຈະຍົກຄຳເວົ້າຂອງຂອງ Paulo Freire, ນັກປັດຊະຍາ ແລະ ນັກການສຶກສາຊາວບຣາຊິນ ຜູ້ທີ່ອຸທິດຊີວິດສ່ວນຫຼາຍໃຫ້ກັບການສຶກສາຜູ້ໃຫຍ່, ການຮູ້ໜັງສືຄວນເປັນ "ການປະຕິບັດຕາມສິດເສລີພາບ, ວິທີການທີ່ຜູ້ຊາຍ ແລະ ແມ່ຍິງຈັດການກັບຄວາມເປັນຈິງຢ່າງມີເຫດ ແລະ ຜົນ ແລະ ສ້າງສັນ ແລະ ຄົ້ນພົບວິທີການເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມໃນການປ່ຽນແປງຂອງໂລກພວກເຂົາ".

ພວກເຮົາບັນລຸຜົນສຳເລັດຮ່ວມກັນໃນດ້ານນີ້. ໃນປີ 1979 ມີພຽງ 68% ຂອງປະຊາກອນໂລກທີ່ສາມາດອ່ານອອກ ແລະ ຂຽນໄດ້. ໃນປີ 2020, ໂຕເລກດັ່ງກ່າວເພີ່ມຂຶ້ນເປັນ 86.7%. ເຖິງແມ່ນວ່າຄວາມຄືບໜ້ານີ້, ຊາວໜຸ່ມ ແລະ ຜູ້ໃຫຍ່ 771 ລ້ານຄົນ ໃນທົ່ວໂລກຍັງບໍ່ມີທັກສະພື້ນຖານການຮູ້ໜັງສື - 60% ໃນນັ້ນ ແມ່ນແມ່ຍິງ ແລະ ເດັກຍິງ.

ການແຜ່ລະບາດຂອງໂຄວິດ-19 ເຮັດໃຫ້ບັນຫານີ້ຮຸນແຮງຂຶ້ນ. ການປິດໂຮງຮຽນ ແລະ ການຢຸດຮຽນ ເນື່ອງຈາກການແຜ່ລະບາດ ມີແນວໂນ້ມທີ່ຈະເຮັດໃຫ້ຄົນສູນເສຍການຮຽນຮູ້ ແລະ ອອກໂຮງຮຽນ. ນີ້ແມ່ນຄວາມຈິງ, ໂດຍສະເພາະໃນກຸ່ມ ປະຊາກອນທີ່ມີຄວາມສ່ຽງ. ເພື່ອຕອບສະໜອງສະພາບອັນຮີບດ່ວນນີ້, ອົງການ ອຸນເນສໂກ ແລະ ບັນດາປະເທດ ສະມາຊິກ ໄດ້ເພີ່ມທະວີຄວາມພະຍາຍາມຂອງຕົນເພື່ອໃຫ້ມີຄວາມໝັ້ນໃຈວ່າຄວາມກ້າວໜ້າທີ່ເກີດຂຶ້ນໃນທົດສະວັດທີ່ຜ່ານຈະບໍ່ຖອຍຫຼັງ ແຕ່ຈະເປັນການເສີມກຳລັງ.

ຕົວຢ່າງເຊັ່ນ: ໃນຫົວຂໍ້ສຳຄັນຂອງການສຶກສາຜູ້ໃຫຍ່ໃນປະເທດສະມາຊິກຂອງຢູເນສໂກ ໄດ້ປັບປຸງໃໝ່ຄຳໝັ້ນສັນຍາຂອງພວກເຂົາໃນການຮູ້ໜັງສືໃນປີນີ້ໂດຍຜ່ານຮັບຮອງຈາກຂອບປະຕິບັດງານມາຣາເກັດ (Marrakech Framework for Action), ເຊິ່ງຮັບຮູ້ວ່າການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ເປັນຕົວຂັບເຄື່ອນຫຼັກສຳລັບເປົ້າໝາຍການພັດທະນາແບບຍືນຍົງທັງໝົດ.

ຍິ່ງໄປກວ່ານັ້ນ, ໃນເດືອນມິຖຸນາ, ຢູເນສໂກ ໄດ້ເປັນເຈົ້າພາບໃນການຈັດກອງປະຊຸມກະກຽມກ່ອນກອງປະຊຸມສຸດຍອດເພື່ອເປັນການປູທາງໄປສູ່ກອງປະຊຸມສຸດຍອດການຫັນປ່ຽນການສຶກສາ ເຊິ່ງຈັດໂດຍ ເລຂາທິການສະຫະປະຊາຊາດ ໃນເດືອນກັນຍາ ທີ່ນະຄອນນິວຢອກ (New York). ກະກຽມກ່ອນປະຊຸມກອງປະຊຸມສຸດຍອດ ໄດ້ລວມເອົາກວ່າ 150 ລັດຖະມົນຕີສຶກສາ ເພື່ອເປັນການຢືນຢັນວ່າ ມື້ອື່ນຈະຕ້ອງກວມ ລວມ ແລະ ເຂົ້າເຖິງກຸ່ມທີ່ດ້ອຍໂອກາດທີ່ສຸດ □ ເຊິ່ງບໍ່ພຽງແຕ່ໃຫ້ທັກສະພື້ນຖານເທົ່ານັ້ນ ແຕ່ຍັງເປັນກຸນແຈສຳຄັນໃນການນຳທາງໄປສູ່ໂລກທີ່ທັນສະໄໝອີກດ້ວຍ. ກອງປະຊຸມສຸດຍອດຢືນຢັນເຖິງຄວາມສຳຄັນຂອງຮູບແບບໃໝ່ຂອງການຮູ້ໜັງສື, ການຮູ້ສື່ດິຈິຕ໋ອນ, ຖືເປັນເຄື່ອງມືສຳລັບການຮຽນຮູ້ຕະຫຼອດຊີວິດ.

ເພື່ອໃຫ້ບັນລຸຈຸດປະສົງເຫຼົ່ານັ້ນ, ປະເທດສະມາຊິກຢູເນສໂກ ໄດ້ເນັ້ນຢ້ຳເຖິງຄວາມຈຳເປັນໃນການລົງທຶນດ້ານການສຶກສາ ແລະ ຄວາມຊ່ວຍເຫຼືອລະຫວ່າງປະເທດທີ່ເພີ່ມຂຶ້ນ ພ້ອມທັງຊັບພະຍາກອນທາງການສຶກສາທີ່ເປີດກວ້າງ, ບໍ່ມີຄ່າໃຊ້ຈ່າຍ ແລະ ມີຄຸນນະພາບສູງ.

ໃນໂອກາດ, ການສະເຫຼີມສະຫຼອງວັນຮູ້ໜັງສືສາກົນ ຢູເນສໂກ ຮຽກຮ້ອງໃຫ້ບັນດາຜູ້ມີບົດບາດທຸກທ່ານໃນ ວຽກງານການສຶກສາ ແລະ ພາກສ່ວນອື່ນໆ ຄິດຄືນໃໝ່ກ່ຽວກັບບົດບາດຂອງການຮູ້ໜັງສື.




Education 2030

ສິ່ງທີ່ໜ້າສົນໃຈ

**Important Website in region**

www.nfedi.org
www.rda.org.la
www.aspbae.org
www.seameocelll.org

ສິ່ງພິມທີ່ໜ້າສົນໃຈ

**Adult Education and Development**

AED 86 (2019): The good adult educator
AED 85: Role and Impact of Adult Education
AED 84: Inclusion and Diversity
AED 83: Skills and Competencies

**International Perspectives in Adult Education**

IPE 80 (2022): Citizenship education and ALE
IPE 79(2019): The contribution of adult education to active participatory citizenship
IPE 77: Rethinking adult learning and education - Asia perspectives
IPE 78: Adult education as a key to development - challenges and success factors

ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ
ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້
ທ່ານສາມາດຂໍຈົດໝາຍຂ່າວນີ້ໄດ້ທີ່ ຫ້ອງການຂອງພວກເຮົາ
ກອງບັນນາທິການ: ພິລານີ ພິດສະໄໝ, ອຸ່ນເພັງ ຄຳມັງ, ຂັນທອງ ອິນທະຈັກ
ທີມງານບັນນາທິການ: ດາລຸນີ ສີສຸລາດ, Chiara D‘urso
ດອກຄຳ ຊົມສີທາປັນຍາ, ສົມໃຈ ແກ້ວເມກ
ບັນນາທິການ: ໂຢຮັນ ແຮລເມັນ

ຈົດໝາຍຂ່າວ

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

ສິ່ງພິມໃໝ່

**Curriculum managerALE**
**Curriculum institutionALE** in Lao language
**Curriculum globALE** in Lao language
**DVV International Annual Report 2021**
**Reaching the Marginalized -** Good Practices in ALE in the Middle East, Southeast and South Asia
**Handbook for NFE Facilitators**
**Soft Skills** Training Manual for Falicitator


ດີວີວີ ອິນເຕີເນເຊິນແນວ
ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la


# Education for Everyone. Worldwide. Lifelong.